ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 14 ຫາ 18 ເມສາ 2025




ກອງປະຊຸມ ສະຫຼຸບວຽກງານກອງທຶນປົກປັກຮັກສາປ່າໄມ້ ປະຈຳປີ 2024

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ກອງປະຊຸມ ສະຫຼຸບວຽກງານກອງທຶນປົກປັກຮັກສາ ປ່າໄມ້ ປະຈຳປີ 2024

ພາບ-ຂ່າວໂດຍ: ພະແນກ ໂຄສະນາ ແລະ ຂ່າວສານ

ກອງປະຊຸມສະຫຼຸບ, ຖອດຖອນບົດຮຽນ ວຽກງານກອງທຶນປົກປັກຮັກສາປ່າໄມ້ ປະຈຳປີ 2024 ແລະ ທິດທາງແຜນການປີ 2025 ໄດ້ຈັດຂຶ້ນໃນວັນທີ 02 ເມສາ 2025 ຢູ່ທີ່ໂຮງແຮມວຽງຈັນພຣາຊາ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງ ທ່ານ ກິແກ້ວ ສິງນາວົງ ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້. ມີຫົວໜ້າກົມປ່າໄມ້, ຫົວໜ້າ-ຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ, ຫົວໜ້າ-ຮອງຫົວໜ້າຂະແໜງປ່າໄມ້ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ນ. ຫຼອນຄຳ ແສງຈັນອຸດົມ ຫົວໜ້າກອງທຶນປົກປັກຮັກສາປ່າໄມ້ ໄດ້ຂຶ້ນລາຍງານສະພາບ ການຈັດຕັ້ງປະຕິບັດວຽກງານໃຫ້ຮູ້ວ່າ: ໄດ້ສຳເລັດການແຕ່ງຕັ້ງຄະນະກຳມະການ ກອງທຶນຂັ້ນທ້ອງຖິ່ນ ໄດ້ 18 ແຂວງ; ສຳເລັດແຈ້ງການໃຫ້ບັນດາແຂວງທົ່ວປະເທດ ສ້າງແຜນເກັບລາຍຮັບຈາກແຫຼ່ງຕ່າງໆໃນປີ 2024 ເພື່ອເກັບລາຍຮັບເຂົ້າກອງທຶນ ແລະ ທຸກແຂວງໄດ້ສົ່ງແຜນເກັບລາຍຮັບໃຫ້ກອງທຶນແລ້ວ; ສຳເລັດການຂໍຄັດແກ້ງົບປະມານກອງທອນ ໃນ 06 ເດືອນ ທ້າຍປີ 2024 ພາກ 63 ໄດ້ຮັບອະນຸມັດແລ້ວ ຈຳນວນເງິນ 1.500 ລ້ານກີບ ໄດ້ຈັດແບ່ງໃຫ້ 2 ໂຄງການທີ່ມີຄວາມຈຳເປັນເພື່ອໄປສືບຕໍ່ນຳໃຊ້ເຂົ້າວຽກງານຂະແໜງການປ່າໄມ້ ຕ້ານໄຟໄໝ້ລາມປ່າ, ການບຸກລຸກປ່າໄມ້ ແລະ ຕິດຕາມກວດກາ, ຊຸກຍູ້ການເກັບລາຍຮັບ; ໄດ້ສະໜອງງົບປະມານໃຫ້ສົ່ງເສີມວຽກງານປູກໄມ້, ຟື້ນຟູປ່າ, ຕ້ານ ແລະ ສະກັດກັ້ນໄຟໄໝ້ລາມປ່າລວມທັງກິດຈະກຳອື່ນໆທີ່ກ່ຽວຂ້ອງໄດ້ ທັງໝົດ 6.033 ຮຕ ໃນ 9 ແຂວງ ແລະ 02 ສູນ. ປີ 2024 ມີແຜນເກັບລາຍຮັບຈາກບ້ວງຕ່າງໆ 10 ຕື້ກວ່າກີບ ເກັບຕົວຈິງເລີ່ມແຕ່ວັນທີ 1




ມັງກອນ ຫາ 24 ທັນວາ 2024 ເກັບໄດ້ 54 ຕື້ນກວ່າກີບ, ສໍາລັບ ບ້ວງກອງທຶນຕາມດໍາລັດ 567/ລບ ໄດ້ຈໍານວນ 9 ຕື້ກວ່າກີບ ນອກນັ້ນແມ່ນບ້ວງໂຄງການຕ່າງໆ ຊຶ່ງວ່າຄຸ້ມຄອງຜ່ານບັນຊີກອງທຶນ ແຕ່ບໍ່ໄດ້ເຂົ້າບັນຊີກອງທຶນໂດຍກົງ.

ທິດທາງແຜນການໃນຕໍ່ໜ້າ ຈະໄດ້ສືບຕໍ່ຈັດຕັ້ງປະຕິບັດວຽກງານກອງທຶນປົກປັກຮັກສາປ່າໄມ້ໃຫ້ມີຄວາມເຂັ້ມແຂງ ແລະ ມີປະສິດທິຜົນສູງ, ໝັ້ນຄົງ ໂດຍສະເພາະແມ່ນ ການກຽມແຜນລົງຊຸກຍູ້ຕິດຕາມ ການເກັບລາຍຮັບຂອງກອງທຶນ 06 ເດືອນຕົ້ນປີ; ກະກຽມແຜນຈັດກອງປະຊຸມສະຫຼຸບບົດຮຽນຮ່ວມກັບ ຄະນະກໍາມະການກອງທຶນ ຂັ້ນທ້ອງຖິ່ນທົ່ວປະເທດ; ສືບຕໍ່ຊຸກຍູ້ຕິດຕາມການເກັບລາຍຮັບນໍາບັນດາແຂວງ ແລະ ການຄຸ້ມຄອງການນໍາໃຊ້ງົບປະມານ ແລະ ແຈ້ງໃຫ້ບັນດາແຂວງສ້າງ ແລະ ສົ່ງແຜນແຜນຄາດຄະເນເກັບລາຍຮັບ ປີ 2025 ສົ່ງໃຫ້ກອງທຶນ ແລະ ວຽກງານອື່ນໆ. ໃນທີ່ປະຊຸມ ບັນດາຜູ້ແທນທີ່ເຂົ້າຮ່ວມໄດ້ມີການປຶກສາຫາລືແລກປ່ຽນຄໍາຄິດຄໍາເຫັນ ຢ່າງກົງໄປກົງມາ ເພື່ອເປັນບົດຮຽນໃນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າໃຫ້ແຕ່ລະແຂວງ ແຕ່ລະພາກສ່ວນຕື່ມອີກ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄໍາແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອໍານອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກໍາ;ແລະ ປ່າໄມ້;